ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ຄະນະປະຈໍາ

0161

ເລກທີ /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 16 ກັນຍາ 2016

# ມະຕິຕົກລົງ

## ຂອງ

## ຄະນະປະຈໍາສະພາແຫ່ງຊາດ

## ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງ ສະພາແຫ່ງຊາດລາວ ກັບ ສະພາແຫ່ງຊາດ ແຫ່ງ ສສ ຫວຽດນາມ

-------------------

- ອີງຕາມການເຫັນດີຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ປະຈໍາ ເດືອນ ມິຖຸນາ 2016.

ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ໂດຍສະເພາະແມ່ນ ລະຫວ່າງ ສະພາແຫ່ງຊາດລາວ ກັບ ສະພາແຫ່ງ ຊາດ ແຫ່ງ ສສ ຫວຽດນາມ.

## ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:

ມາດຕາ 1: ເຫັນດີແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງ ສະພາແຫ່ງຊາດລາວ ກັບ ສະພາແຫ່ງຊາດ ແຫ່ງ ສສ ຫວຽດນາມ ຊຶ່ງປະກອບດ້ວຍບັນດາສະຫາຍ ດັ່ງນີ້:

1. ສະຫາຍ ສົມພັນ ແພງຄໍາມີ, ສສຊ ເຂດ 3 ແຂວງ ຫຼວງນໍ້າທາ, ຮອງປະທານສະພາແຫ່ງຊາດ ເປັນປະທານ;
2. ສະຫາຍ ນາງ ມະນີວັນ ເຢຍປາວເຮີ, ສສຊ ເຂດ 8 ແຂວງຫົວພັນ, ຮອງປະທານກໍາມາທິການວັດທະນະທໍາ-ສັງຄົມ, ເປັນຮອງປະທານ;

| | | |
|---|---|---|
| 3. ສະຫາຍ ບົວເກດ ພົມມະຈັນ, | ສສຊ ເຂດ 1 ນະຄອນຫລວງວຽງຈັນ, | ເປັນກໍາມະການ; |
| 4. ສະຫາຍ ບົວທອງ ອຸແສງຄໍາ, | ສສຊ ເຂດ 2 ແຂວງຜົ້ງສາລີ, | ເປັນກໍາມະການ; |
| 5. ສະຫາຍ ນາງ ປານີ ຢາທໍ່ຕູ້, | ສສຊ ເຂດ 6 ແຂວງຫລວງພະບາງ, | ເປັນກໍາມະການ; |
| 6. ສະຫາຍ ດຣ. ນາງ ຄໍາຈອມພູ ສີລິທໍາ, | ສສຊ ເຂດ 5 ແຂວງບໍ່ແກ້ວ, | ເປັນກໍາມະການ; |
| 7. ສະຫາຍ ພັນໂທ ແອ່ນ ອຸ່ນອານົງນຸດ, | ສສຊ ເຂດ 8 ແຂວງຫົວພັນ, | ເປັນກໍາມະການ; |
| 8. ສະຫາຍ ບຸນຕົ້ນ ຈັນທະພອນ, | ສສຊ ເຂດ 9 ແຂວງຊຽງຂວາງ, | ເປັນກໍາມະການ; |
| 9. ສະຫາຍ ປອ. ສຸວັນນີ ໄຊຊະນະ, | ສສຊ ເຂດ 11 ແຂວງບໍລິຄໍາໄຊ, | ເປັນກໍາມະການ; |
| 10. ສະຫາຍ ບຸນເຕັມ ຊວງສາຍະວົງ, | ສສຊ ເຂດ 13 ແຂວງສະຫວັນນະເຂດ, | ເປັນກໍາມະການ; |
| 11. ສະຫາຍ ນາງ ໄຮມະນີ ວົງໜໍ່ແກ້ວ, | ສສຊ ເຂດ 16 ແຂວງເຊກອງ, | ເປັນກໍາມະການ; |

ມາດຕາ 2: ບັນດາກຳມາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ເປັນຢ່າງດີ.

ມາດຕາ 3: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ປານີ ຢາທໍ່ຕູ້